## ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 12 ມະກະຣາ(ມັງກອນ) 2025 (01-12-2025)

---

## ຈຸດສຸມຂອງການນະມັສການຂອງພວກເຮົາ

**ຈຸດສຳຄັນໃນບົດຮຽນ:** ມີແຕ່ພຣະເຈົ້າເທົ່ານັ້ນທີ່ຊົງສົມຄວນໄດ້ຮັບການນະມັສການຂອງພວກເຮົາ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ເມື່ອເວົ້າເຖິງຄົນດັງ, ບອັບ ດີແລນ (Bob Dylan), ກໍເປັນນຶ່ງໃນບັນດາຄົນທີ່ໂດ່ງດັງຢ່າງແນ່ນອນ. ໃນຄວາມເປັນຈິງ, ດີແລນແມ່ນນຶ່ງໃນບັນດານັກປະພັນເພງທີ່ມີຊື່ສຽງທີ່ສຸດໃນປວັດສາດດົນຕຣີອາເມຣິກາ. ໃນຊ່ວງປາຍທົດສວັດປີ 1970 ຫຼັງຈາກປະກອບອາຊີບມາຫຼາຍທົດສວັດ(ຫຼາຍ10ປີ) ທີ່ເຕັມໄປດ້ວຍຢາເສບຕິດ, ເຫຼົ້າ, ແລະການໃຊ້ຊີວິດທີ່ສິ້ນຫວັງ ລາວໄດ້ປະກາດວ່າ: "ລາວໄດ້ປ່ຽນມານັບຖືສາສນາຄຣິສຕຽນ" (ຮູ້ຈັກພຣະເຈົ້າ). ໃນປີ 1979, ລາວໄດ້ຂຽນແລະອັດເພງທີ່ສະແດງເຖິງພຍານຂອງພຣະເຈົ້າແລະຈັບເອົາຄວາມຈິງອັນເລິກເຊິ່ງກ່ຽວກັບການນະມັສການ. ທຸກໆຄົນທີ່ມີຊີວິດຢູ່ໃນຍຸກສມັຍນັ້ນທີ່ກຳລັງອ່ານນີ້ ອາດຈະມີທຳນອງເພງນີ້ວົນວຽນຢູ່ໃນຫົວໃຈຕອນນີ້. ຈົ່ງພາກັນມາຮ່ວມຮ້ອງເພງນຳກັນເດີ.....**ດີແລ້ວ, ມັນອາດຈະເປັນມານຊາຕານ ຫຼືມັນອາດຈະເປັນພຣະເຈົ້າ ແຕ່ວ່າທ່ານຈຳເປັນ<u>ຕ້ອງຮັບໃຊ້ຜູ້ໃດຜູ້ນຶ່ງ</u>!** ທ່ານ ບອັບ ດີແລນ ເວົ້າຖືກ. ຄວາມຈິງແມ່ນ, ຜູ້ຊົງສ້າງພວກເຮົາ(ພຣະເຈົ້າ)ໄດ້ຊົງສ້າງພວກເຮົາໃຫ້ຊອກຫາ<u>ຄວາມຫວັງ</u>ແລະ<u>ເຫດຜົນ</u>ໃນຊີວິດໂດຍຜ່ານການນະມັສການພຣະອົງເທົ່ານັ້ນ. <u>ບໍ່ມີຜູ້ໃດມີຄ່າຄວນຫຼືສາມາດໃຫ້ພວກເຮົາມີຄວາມຫວັງ</u>. ໃນພຣະຄັມພີເອຊາຢາ, ພວກເຮົາເຫັນປະຊາຊົນຊາວອິສຣາເອນຮຽນຮູ້ບົດຮຽນນີ້ດ້ວຍວິທີທີ່ຍາກລຳບາກ. ຫວັງວ່າພວກເຮົາຈະສາມາດເລືອກເອົາສິ່ງທີ່ຖືກຕ້ອງໄດ້ຕັ້ງແຕ່ເລີ່ມຕົ້ນແລະນະມັສການພຣະເຈົ້າ. ຈົ່ງພາກັນມາຮຽນຮູ້ວິທີການທີ່ພວກເຮົາສາມາດນະມັສການ**<u>ພຣະອົງຜູ້ດຽວ</u>**ທີ່ຊົງສາມາດຊ່ວຍກອບກູ້ພວກເຮົາໄດ້, **<u>ພຣະອົງຜູ້ດຽວ</u>**ທີ່ຊົງສົມຄວນທີ່ຈະໄດ້ຮັບຄຳສັຣເສີນ.

*ຄົນມີຊື່ສຽງຄົນໃດແດ່ທີ່ທ່ານຊື່ນຊົມຍົບດີ?*

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

## ການສຶກສາພຣະຄັມພີ

### 1. <u>ເອຊາຢາ 40:21-24</u>

*21 ພວກທ່ານບໍ່ຮູ້ບໍ? ບໍ່ເຄີຍໄດ້ຍິນບໍ? ແຕ່ກ່ອນໆມາບໍ່ມີຜູ້ໃດບອກບໍ? ທ່ານເຄີຍໄດ້ຍິນການເລີ່ມຕົ້ນສ້າງໂລກບໍ? 22 ໂລກນັ້ນກໍສ້າງໂດຍພຣະອົງຜູ້ຊົງປະທັບເທິງບັນລັງຊຶ່ງຢູ່ເໜືອໂລກແລະເທິງທ້ອງຟ້າ, ມະນຸດສະໂລກເບື້ອງລຸ່ມກໍນ້ອຍເທົ່າມົດ! ພຣະອົງຊົງກາງທ້ອງຟ້າອອກເໝືອນກາງຜ້າກັ້ງ, ເໝືອນກາງຜ້າເຕັນໃຫ້ຄົນຢູ່ອາສັຍ. 23 ຊົງເຮັດໃຫ້ຜູ້ປົກຄອງໝົດອຳນາດແລະບໍ່ໃຫ້ມີຄວາມໝາຍຫຍັງໝົດ. 24 ພວກເຂົາເປັນເໝືອນຫຍ້າອ່ອນພໍແຕ່ຫວ່ານລົງແລະປົ່ງຮາກພຣະຜູ້ເປັນເຈົ້າກໍໃຫ້ລົມພັດມາພວກເຂົາຈຶ່ງຫ່ຽວແຫ້ງແລະປິວໄປເໝືອນເຟືອງ.*

ການນະມັສການມີຈຸດເລີ້ມຕົ້ນ. ທຸກໆສາສນາປະຕິບັດການນະມັສການ ແຕ່ຄວາມພຍາຍາມເຫຼົ່ານັ້ນເລີ້ມຕົ້ນດ້ວຍການອຸທອນກັບພຣະເຈົ້າໂດຍຫວັງວ່າພວກເຮົາຈະໄດ້ຮັບການຊ່ວຍເຫຼືອບາງຢ່າງ. ຖ້າພວກເຮົາສາມາດເຮັດໄດ້ພຽງພໍ, ອະທິຖານພຽງພໍ, ຫຼືຖວາຍພຽງພໍ, ໃນທີ່ສຸດ, ພວກເຮົາຈະຊັກຈູງພຣະເຈົ້າອົງນຶ່ງທີ່ພວກເຮົາບໍ່ຮູ້ຈັກໃຫ້ເຮັດຊີວິດຂອງພວກເຮົາດີຂຶ້ນ. ບັນຫາຂອງການເຂົ້າໃຈກ່ຽວກັບການນະມັສການແບບນັ້ນແມ່ນຄວາມຈິງທີ່ວ່າ: ຖ້າພວກເຮົາເລີ້ມຕົ້ນຈາກພວກເຮົາເອງ, ພຣະເຈົ້າທີ່ພວກເຮົາຮັບໃຊ້ກໍຈະເປັນພຽງແຕ່

ການສະທ້ອນໃຫ້ເຫັນເຖິງຕົວເຮົາເອງ. ໃນຂອບເຂດຄວາມຄິດນັ້ນ, ເພງສັຣເສີນດັ້ງເດີມ "**ຫັນຕາຂອງທ່ານໃສ່ພຣະເຢຊູ**" ຈະຕ້ອງເປັນ "**ຫັນຕາຂອງທ່ານເບິ່ງຕົວເອງ**". <u>ບ່ອນເລີ້ມຕົ້ນທີ່ແທ້ຈິງພຽງແຫ່ງດຽວແມ່ນພຣະເຈົ້າ</u>. ພວກເຮົາບໍ່ໄດ້ນະມັສການພຣະອົງເພື່ອໃຫ້ພຣະອົງຕອບສນອງຕໍ່ພວກເຮົາ-ນັ້ນແມ່ນສິ່ງທີ່ສາສນາເຮັດ. ພວກເຮົານະມັສການພຣະອົງດ້ວຍເຫດຜົນວ່າພຣະອົງຊົງເປັນໃຜ ແລະຍ້ອນວ່າທັງໝົດທີ່ພຣະອົງໄດ້ຊົງເຮັດເພື່ອພວກເຮົາ. ພຣະຜູ້ເປັນເຈົ້າແມ່ນບ່ອນທີ່ການນະມັສການເລີ້ມຕົ້ນສເມີໄປ. ພວກເຮົາໄດ້ເຫັນມາແລ້ວໃນບົດທີ່ 6 ໃນຄຳເວົ້າຂອງຜູ້ທຳນວາຍເອຊາຢາເອງວ່າ: "ໃນປີທີ່ກະສັດ ອຸດຊີຢາ ສິ້ນພຣະຊົນນັ້ນ, ຂ້າພະເຈົ້າໄດ້ເຫັນພຣະຜູ້ເປັນເຈົ້າຊົງປະທັບເທິງບັນລັງສູງແລະພຣະສງ່າຣາສີເຄື່ອງສລອງຂອງພຣະອົງໄດ້ເຕັມພຣະວິຫານ" (ຂໍ້ 1). ເມື່ອພຣະເຈົ້າຊົງຖືກມອງເຫັນ, ພຣະອົງຊົງໄດ້ຖືກນະມັສການ. ເນື່ອງຈາກການເຫັນພຣະເຈົ້າແມ່ນບ່ອນທີ່ການນະມັສການເລີ້ມຕົ້ນ, ດັ່ງນັ້ນການຊ່ອຍເຫຼືອທີ່ພວກເຮົາຕ້ອງການແມ່ນໄດ້ພົບເຫັນໃນການເຂົ້າໃຈພຣະລັກສນະຂອງພຣະເຈົ້າທີ່ພວກເຮົານະມັສການ. ໃນພຣະຄັມພີເອຊາຢາບົດທີ່ 40 ຂໍ້ 21, ພຣະເຈົ້າໄດ້ຊົງຮຽກເອີ້ນປະຊາກອນຂອງພຣະອົງໃຫ້ນະມັສການພຣະອົງ ໂດຍການຊົງຖາມຄຳຖາມຍິ່ງໃຫຍ່ 4 ຂໍ້. ພຣະອົງບໍ່ໄດ້ຊົງຊອກຫາຂໍ້ມູນ. <u>ພຣະອົງຊົງສຸມໃສ່ການເອົາໃຈໃສ່ຂອງຊົນຊາດອິສຣາເອນ</u>. ແຕ່ລະຄຳຖາມເຮັດໃຫ້ຊາວອິສຣາເອນເຂົ້າໃກ້ທີ່ຈະ<u>ໄດ້ເຫັນ</u>ພຣະເຈົ້າແລະ<u>ນະມັສການ</u>ພຣະອົງ (ອຊຢ 40:21): **(ກ)** "ພວກທ່ານບໍ່ຮູ້ບໍ**?"** **(ຂ)** "ພວກທ່ານບໍ່ເຄີຍໄດ້ຍິນບໍ**?"** **(ຄ)** "ແຕ່ກ່ອນໆມາບໍ່ມີຜູ້ໃດບອກບໍ**?"** **(ງ)** "ທ່ານເຄີຍໄດ້ຍິນການເລີ້ມຕົ້ນສ້າງໂລກບໍ**?"** ພວກເຮົາສາມາດໄດ້ຍິນຈຸດທີ່ພຣະເຈົ້າໄດ້ຊົງຢູ່ໃນຄຳຖາມເຫຼົ່ານີ້. ບັນດາຊາວອິສຣາເອນບໍ່ມີຂໍ້ແກ້ຕົວ. ທຸກສິ່ງທຸກຢ່າງທີ່ພວກເຂົາເຈົ້າຈຳເປັນຕ້ອງຮູ້ກ່ຽວກັບພຣະເຈົ້າໄດ້ຖືກເປີດເຜີຍຕໍ່ພວກເຂົາເຈົ້າ. ແຕ່ໃນຄວາມດື້ດ້ານຂອງພວກເຂົາເຈົ້າ, ພວກເພິ່ນໄດ້ກັບຄືນໄປຫາຮູບປັ້ນ (ຮູບເຄົາລົບ) ຂອງພວກເຂົາເຈົ້າແລະປະຕິເສດສັນຕິສຸກທີ່ພຣະເຈົ້າໄດ້ຊົງສເນີໃຫ້. ເຖິງແມ່ນວ່າມີການກະທຳຜິດທຸກຢ່າງ, ພຣະເຈົ້າໄດ້ຊົງຊີ້ນຳແຜນການທີ່ຈະໄຖ່ບັນດາຜູ້ຄົນແຫ່ງພັນທະສັນຍາຂອງພຣະອົງ-ແຜນແຫ່ງການເປັນຊະເລີຍແລະການຊົງຕັດສິນພິພາກສາ, ອິສຣະພາບ, ແລະການຟື້ນຟູ. ເໜືອສິ່ງອື່ນໃດມາເຖິງພຣະສັນຍາຂອງ**ເອມານູເອນ-ພຣະເຈົ້າຜູ້ຊົງສະຖິດຢູ່ກັບພວກເຮົາ.** ການນະມັສການເລີ້ມຕົ້ນດ້ວຍການມອງເຫັນພຣະເຈົ້າແລະເຫັນແວັບໆສິ່ງທີ່ເບິ່ງບໍ່ເຫັນແລະບໍ່ມີທີ່ສິ້ນສຸດ. ໃນຂໍ້ພຣະຄັມພີຊ່ວງນີ້, ເອຊາຢາໄດ້ໃຫ້ຮູບພາບແກ່ພວກເຮົາຫຼາຍຮູບເພື່ອໃຫ້ພວກເຮົາພິຈາຣະນາເບິ່ງໃນສິ່ງເຫຼົ່ານີ້:

- ພວກເຮົາເຫັນພຣະເຈົ້າຜູ້ຊົງມີອຳນາດສ້າງໂລກໃນຕອນຕົ້ນຂອງສັບພະສິ່ງ.
- ພວກເຮົາເຫັນພຣະເຈົ້າຜູ້ຊົງເປັນຜູ້ປົກຄອງທຸກສິ່ງ ແລະບໍ່ມີບັນລັງໃດສເມີເໝືອນ.
- ພວກເຮົາເຫັນພຣະເຈົ້າຜູ້ຊົງຍິ່ງໃຫຍ່ຫຼາຍ ພຣະອົງຊົງເຮັດໃຫ້ໂລກທັງໝົດເບິ່ງຄືວ່ານ້ອຍໂດຍການປຽບທຽບ.
- ພວກເຮົາເຫັນພຣະເຈົ້າຜູ້ຊົງມີຣິດເດດອຳນາດເໜືອເຈົ້າຊາຍທຸກຄົນໃນໂລກ. ບໍ່ມີອຳນາດໃດສາມາດເຂົ້າຫາຄວາມຍິ່ງໃຫຍ່ຂອງພຣະອົງໄດ້. **<u>ພຣະເຈົ້າເໜືອກວ່າທຸກສິ່ງ</u>.** ທ່ານບໍ່ຮູ້ບໍ່? ທ່ານບໍ່ເຫັນບໍ່? ພຣະເຈົ້າຊົງມີພຣະອຳນາດສູງສຸດແລະສົມຄວນໄດ້ຮັບຄຳສັຣເສີນຂອງພວກເຮົາ.

*ທ່ານໄດ້ເຫັນພລັງອຳນາດຂອງພຣະເຈົ້າປາກົດໃຫ້ເຫັນໃນຮູບແບບໃດແດ່?*

## 2. <u>ເອຊາຢາ 40:25-28</u>

*25 ພຣະຜູ້ເປັນເຈົ້າອົງບໍຣິສຸດຊົງຖາມວ່າຈະປຽບທຽບຜູ້ໃດໃສ່ເຮົາ? ມີຜູ້ໃດແດ່ເໝືອນເຮົາ? 26 ຈົ່ງແຫງນໜ້າຂຶ້ນເບິ່ງຟ້າດູ! ຜູ້ໃດ*
*ສ້າງດາວທັງຫລາຍທີ່ທ່ານເຫັນນີ້? ພຣະອົງຜູ້ຊົງນຳມັນອອກມາເໝືອນຂະບວນກອງທັບ ຊົງຮູ້ຈັກວ່າມັນມີຫລາຍປານໃດແລະຊົງຕັ້ງ*
*ຊື່ໃຫ້ມັນທຸກໆດວງ! ດ້ວຍຣິດທານຸພາບອັນຍິ່ງໃຫຍ່ຂອງພຣະອົງນັ້ນ ຈຶ່ງບໍ່ມີຈັກດວງສູນເສັຽໄປ! 27 ອິດສະຣາເອນເອີຍ! ເປັນຫຍັງ*
*ພວກເຈົ້າຈຶ່ງຈົ່ມວ່າພຣະຜູ້ເປັນເຈົ້າບໍ່ຮູ້ເຫັນຄວາມທຸກຂອງພວກເຈົ້າ ຫຼືຊົງກີດຂວາງສິດທິຂອງພວກເຈົ້າໄວ້. 28 ພວກເຈົ້າບໍ່ຮູ້ບໍ?*
*ພວກເຈົ້າບໍ່ເຄີຍໄດ້ຍິນບໍ? ວ່າພຣະຜູ້ເປັນເຈົ້າຊົງເປັນພຣະເຈົ້າຕະຫລອດໄປເປັນນິດ. ພຣະອົງຊົງສ້າງໂລກທັງໝົດ, ພຣະອົງບໍ່ເຄີຍ*
*ເມື່ອຍ ຫລື ອ່ອນແອ ບໍ່ມີໃຜຢັ່ງຮູ້ນ້ຳພຣະທັຍຂອງພຣະອົງ.*

ພຣະເຈົ້າຊົງມີຄໍາຖາມອີກຫຼາຍຢ່າງສໍາລັບຊາວອິສຣາເອນ, ແລະຄໍາຖາມເຫຼົ່ານີ້ໄດ້ບັງຄັບໃຫ້ຊາວອິສຣາເອນສືບຕໍ່ມຸ່ງໜ້າໄປທີ່ພຣະເຈົ້າຕໍ່ໄປ. ແຕ່ມີອີກແງ່ມຸມນຶ່ງຂອງການອະທິບາຍຂອງເອຊາຢາ ກ່ຽວກັບອໍານາດຂອງພຣະເຈົ້າທີ່ເຮັດໃຫ້ທຸກສິ່ງທຸກຢ່າງຢູ່ໃນນັ້ນ. ບໍ່ພຽງແຕ່ຊາວອິສຣາເອນຕ້ອງເຫັນວຽກງານຂອງພຣະເຈົ້າເທົ່ານັ້ນ, ແຕ່ພວກເຂົາເຈົ້າຍັງໄດ້ຜະເຊີນໜ້າກັບທັມມະຊາດທີ່ເປັນເອກກະລັກຂອງພຣະອົງ. ບໍ່ມີພຣະເຈົ້າອື່ນສ້າງສິ່ງທັງໝົດນີ້. ບໍ່ມີພຣະເຈົ້າອື່ນຄອບຄອງສິ່ງທັງໝົດນີ້. ບໍ່ມີພຣະເຈົ້າອື່ນປົກຄອງສິ່ງທັງໝົດນີ້. ຖ້າມີພຣະເຈົ້າອື່ນທີ່ມີອໍານາດນີ້ຢູ່, ການນະມັສການຂອງພວກເຮົາຈະຖືກແບ່ງອອກລະຫວ່າງທັງສອງຢ່າງຖືກຕ້ອງ. ແຕ່ພຣະເຈົ້າບໍ່ແມ່ນນຶ່ງໃນສອງຫຼືນຶ່ງໃນຫຼາຍໆ-**ພຣະອົງຊົງເປັນອົງນຶ່ງອົງດຽວ**(He Is One–The Only One). ເອຊາຢາບໍ່ໄດ້ຄົ້ນພົບສິ່ງນີ້ດ້ວຍຕົນເອງ. ຈົ່ງກັບໄປອ່ານເອຊາຢາບົດທີ 6 ແລະອ່ານຄໍາພຍານຂອງເອຊາຢາເອງກ່ຽວກັບສິ່ງທີ່ລາວໄດ້ເຫັນ: ພຣະເຈົ້າຊົງປະທັບຢູ່ເທິງພຣະບັນລັງຂອງພຣະອົງພ້ອມດ້ວຍຜ້າຄຸມ(robe)ຂອງພຣະອົງຊຶ່ງເຕັມໄປທົ່ວພຣະວິຫານ. ບັນດາພວກເຊຣາຟີມ (Seraphim) ກໍາລັງລ້ອມຮອບບັນລັງແລະຮ້ອງຕະໂກນໂຕ້ຕອບກັນວ່າ: "ບໍຣິສຸດ ບໍຣິສຸດ ບໍຣິສຸດ" (ຂໍ້ 3). ຄໍາປະກາດສາມປະການຂອງພຣະອົງບໍ່ພຽງແຕ່ເປັນການເລີ້ມຕົ້ນບົດເພງສັຣເສີນທີ່ສລຽວສລາດເທົ່ານັ້ນແຕ່ຍັງເປັນຄໍາອະທິບາຍທີ່ຊັດເຈນເຖິງພຣະລັກສນະນິສັຍຂອງພຣະເຈົ້າໃນດ້ານນີ້ດ້ວຍ. ຄວາມສັກສິດບໍ່ພຽງແຕ່ເປັນວິຖີຊີວິດທີ່ເຄັ່ງສາສນາເທົ່ານັ້ນຕາມວິທີທີ່ພວກເຮົາເຂົ້າໃຈເຖິງຄວາມສັກສິດ. ຄໍາວ່າ "ສັກສິດ" ໃນຮູບແບບທີ່ງ່າຍທີ່ສຸດ, ມີຄວາມໝາຍວ່າ "ອື່ນໆ"(other). ບັນດາເຫຼົ່າທູດສວັນໄດ້ປະກາດດ້ວຍຄວາມຊັດເຈນວ່າ: ພຣະເຈົ້າທີ່ຊົງປະທັບຢູ່ເທິງບັນລັງນີ້ຊົງເປັນອົງດຽວເທົ່ານັ້ນ. ບໍ່ແປກໃຈທີ່ທ່ານເອຊາຢາເພີ້ມຄໍາວ່າ "ຜູ້ບໍຣິສຸດ" "Holy One" (40:25) ເຂົ້າໃນບັນຊີຊື່ຂອງພຣະເຈົ້າທີ່ເພີ້ມຂຶ້ນ. ພຣະອົງບໍ່ຄືກັບຄົນອື່ນ! (He is like no other!) ຈົ່ງຄຶດກ່ຽວກັບພຣະເຈົ້າໃນນາມອົງພຣະຜູ້ສ້າງ. ພຣະອົງບໍ່ໄດ້ຊົງເຮັດຕາມແຜນການຂອງຄົນໃດຄົນນຶ່ງ. ພຣະອົງບໍ່ໄດ້ຊົງປຶກສາຫາລືກັບແຜນການອື່ນໃດ. **ພຣະເຈົ້າເທົ່ານັ້ນທີ່ຊົງສ້າງ.** ພຣະອົງບໍ່ໄດ້ຊົງໄປຫາວັດຖຸດິບ(ສ່ວນປະກອບ)ທີ່ອື່ນດ້ວຍ. ພຣະເຈົ້າບໍ່ພຽງແຕ່ຊົງສ້າງທຸກສິ່ງເທົ່ານັ້ນ ແຕ່ພຣະອົງຍັງຊົງຮັກສາການຊົງສ້າງສັນຂອງພຣະອົງດ້ວຍພລັງຂອງພຣະອົງອີກດ້ວຍ. ພຣະເຈົ້າຊົງສົມຄວນແກ່ການນະມັສການຂອງພວກເຮົາເພາະພຣະອົງບໍ່ຊົງປ່ຽນແປງ. ພຣະອົງຊົງເປັນພຣະເຈົ້າອົງນິຣັນດອນ, ຜູ້ຊົງຣິດທານຸພາບທີ່ບໍ່ສິ້ນສຸດ. ທຸກສິ່ງທີ່ພຣະອົງຊົງເຄີຍເປັນພຣະອົງຍັງຄົງຊົງເປັນຢູ່ ພຣະເຈົ້າຊົງມີພຣະອໍານາດນິຣັນດອນ. **ພຣະອົງຊົງຄູ່ຄວນແກ່ການສັຣເສີນຂອງພວກເຮົາ!**

*ແມ່ນຫຍັງໃນການຊົງສ້າງຂອງພຣະເຈົ້າທີ່ນໍາທ່ານໄປສູ່ການນະມັສການພຣະອົງ?*

### 3. ເອຊາຢາ 40:29-31

*29 ພຣະອົງຊົງເຮັດໃຫ້ຜູ້ອ່ອນແຮງແລະອິດເມື່ອຍມີກໍາລັງວັງຊາ. 30 ແມ່ນແຕ່ພວກຄົນໜຸ່ມກໍຈະອ່ອນແຮງແລະຊາຍສະກັນກໍຈະລົ້ມລົງ. 31 ແຕ່ຄົນທັງຫລາຍທີ່ລໍຄອຍພຣະຜູ້ເປັນເຈົ້າຈະໄດ້ຮັບການເສີມສ້າງເຫື່ອແຮງຂຶ້ນໃໝ່ ພວກເຂົາຈະມີປີກບິນໄປເໝືອນນົກອິນຊີເມື່ອພວກເຂົາແລ່ນຫລືຍ່າງໄປຈະບໍ່ເມື່ອຍແລະອ່ອນແຮງ.*

**ພຣະເຈົ້າຊົງມີອໍານາດທັງໝົດ.** ພຣະອົງຊົງມີສິດທີ່ຈະປົກຄອງສິ່ງທີ່ພຣະອົງຊົງສ້າງ. ພຣະເຈົ້າຊົງບໍຣິສຸດແລະບໍ່ມີໃຜທຽບໄດ້. ພຣະອົງຊົງມີອໍານາດທຸກຢ່າງແລະຊົງປະຄອງທຸກສິ່ງໄວ້ໃນພຣະຫັດ(ມື)ຂອງພຣະອົງ. ພຣະເຈົ້າຊົງເປີດເຜີຍພຣະອົງເອງໃນການສ້າງສັນຂອງພຣະອົງ ແລະຜ່ານພຣະວັຈນະ(ຄໍາເວົ້າ)ຂອງພຣະອົງ. ຜູ້ປະພັນເພງສັຣເສີນໄດ້ອະທິບາຍໄວ້ຢ່າງສົມບູນແບບວ່າ: "ແຜ່ນດິນໂລກແລະສິ່ງທັ້ງປວງໃນນັ້ນ, ໂລກແລະສິ່ງທີ່ອາສັຍໃນນັ້ນເປັນຂອງພຣະເຈົ້າ" (ເພງສັຣເສີນ 24:1). ຂໍ້ທີ 29 ສືບຕໍ່ດ້ວຍຄໍາເວົ້າເຕັມດ້ວຍພຣະຄຸນສອງຄໍາ: "ພຣະອົງຊົງປະທານ"("He Gives"). ໃນທາງດຽວກັນ, ພຣະເຈົ້າໄດ້ຊົງລິເລີ້ມການຊົງສ້າງດ້ວຍພຣະຄໍາຂອງພຣະອົງ. ພຣະອົງຊົງໄດ້ລິເລີ້ມຄວາມສັມພັນຂອງພຣະອົງກັບຜູ້ຄົນໂດຍຜ່ານການສແວງຫາພວກເຂົາເຈົ້າ. ພຣະອົງຊົງໄດ້ລິເລີ້ມຄວາມລອດພົ້ນຂອງພວກເຮົາໂດຍການທໍາງານແຜນການໄຖ່ຖອນຂອງພຣະອົງຜ່ານທາງເອມານູເອນ (ອຊຢ 9). ແລະພຣະເຈົ້າຊົງລິເລີ້ມການນະມັສການຂອງພວກເຮົາໂດຍຊົງປະທານພລັງຂອງພຣະອົງແກ່ພວກເຮົາ.

*ມີບາງວິທີໃດແດ່ທີ່ຊີວິດສາມາດເຮັດໃຫ້ພວກເຮົາໝົດເຫື່ອແຮງ?*

ເອຊາຢາ ເຂົ້າໃຈຂັ້ນຕອນຂອງການເຂົ້າໃກ້ພຣະເຈົ້າໃນການນະມັສການເລີ່ມຕົ້ນດ້ວຍການກັບໃຈ (ຖິ້ມໃຈເກົ່າເອົາໃຈໃໝ່), ສືບຕໍ່ດ້ວຍການໃຫ້ອະພັຍ, ແລະນໍາໄປສູ່ພາຣະກິຈ (ເອຊາຢາ ບົດທີ່ 6). ວຽກງານທີ່ພຣະເຈົ້າໄດ້ຊົງເຮັດໃນໃຈຂອງເອຊາຢາເປັນຈຸດຕົ້ນຂອງວຽກງານໃຫຍ່ກວ່າທີ່ພຣະເຈົ້າຈະຊົງເຮັດສໍາລັບຢູດາ. ພຣະເຈົ້າໄດ້ຊົງເປີດເຜີຍພຣະອົງເອງ, ຢູດາໄດ້ເຫັນພຣະອົງແລະຮູ້ເຖິງຄວາມບາບ, ແລະການສາຣະພາບກໍ່ຖືກຕາມມາດ້ວຍໄຟແຫ່ງການຊໍາລະລ້າງ. ຈາກນັ້ນພຣະສຸຣະສຽງຂອງພຣະເຈົ້າກໍ່ໄດ້ຍິນແລະການຍອມຈໍານົນຕໍ່ພຣະເຈົ້າຢ່າງສົມບູນກໍ່ເກີດຂຶ້ນ. ສິ່ງທີ່ເລີ່ມຕົ້ນດ້ວຍການເປີດເຜີຍຂອງພຣະເຈົ້າເອງໄດ້ສິ້ນສຸດລົງດ້ວຍຜູ້ນະມັສການທີ່ເຮັດພັນທະກິຈ. ແຕ່ພຣະເຈົ້າບໍ່ຊົງປ່ອຍໃຫ້ພວກເຮົາທໍາພາຣະກິຈນີ້ໂດຍລໍາພັງຕົນເອງ. ພຣະອົງຊົງປະທານພລັງແກ່ພວກເຮົາ. ພຣະເຈົ້າບໍ່ໄດ້ຊົງປະກາດການພິພາກສາທີ່ກໍາລັງຈະເກີດຂຶ້ນຜ່ານທາງບັນດາຜູ້ເຜີຍພຣະວັຈນະຂອງພຣະອົງເທົ່ານັ້ນ. ພຣະອົງຍັງຊົງສະແດງຫຼາຍກວ່າສະແດງຣິດອໍານາດຂອງພຣະອົງໃນການສ້າງສັນ. <u>ພຣະອົງຊົງພິສູດຊໍ້າແລ້ວຊໍ້າອີກໃນທຸກໆທາງວ່າພຣະອົງເທົ່ານັ້ນຄືພຣະເຈົ້າ</u>. ພຣະອົງຊົງເລີ່ມຕົ້ນຄວາມລອດຂອງພວກເຮົາໂດຍການສົ່ງ ເອມານູເອນ ລົງມາໄຖ່ພວກເຮົາສໍາລັບພຣະອົງເອງ. ພຣະອົງຍັງຊົງຮຽກເອີ້ນ, ຊົງເປີດເຜີຍ, ຊົງໃຫ້ອະພັຍ, ແລະຊົງສົ່ງມາ. **<u>ພຣະອົງບໍ່ໄດ້ຊົງປ່ຽນແປງແລະຈະບໍ່ຊົງປ່ຽນແປງ</u>** (He has not changed and will not change). ພຣະອົງຊົງສົມຄວນໃດ້ຮັບການເຄົາຣົບບູຊາຈາກພວກເຮົາ. ພວກເຮົາໄດ້ຮັບຄວາມຮັກຈາກພຣະອົງເມື່ອພວກເຮົາເຄົາຣົບບູຊາພຣະອົງ. ພຣະອົງຈະຊົງປະທານກໍາລັງແກ່ພວກເຮົາ. ພວກເຮົາສາມາດໂບຍບິນໄດ້. ພວກເຮົາສາມາດແລ່ນໄດ້. ພວກເຮົາສາມາດເຄົາຣົບບູຊາໄດ້.

## ນໍາໃຊ້ໃນຊີວິດ

ມີແຕ່ພຣະເຈົ້າເທົ່ານັ້ນທີ່ຊົງສົມຄວນໄດ້ຮັບການນະມັສການຂອງພວກເຮົາ. ຈົ່ງໃຊ້ນິ່ງໃນການນໍາໃຊ້ໃນຊີວິດຕໍ່ລົງໄປນີ້:

- **ສະຖານທີ່ເລີ່ມຕົ້ນ.** ການເດີນທາງນະມັສການເລີ່ມຕົ້ນດ້ວຍການເຫັນພຣະເຈົ້າວ່າພຣະອົງແມ່ນໃຜ ແລະຕອບສນອງຕໍ່ຂໍ້ສເນີການໃຫ້ອະພັຍຂອງພຣະອົງໃນພຣະຄຣິດ. ພຣະເຈົ້າໄດ້ຊົງເປີດເຜີຍພຣະອົງເອງແກ່ທ່ານຢ່າງໃດ? ຄຸນລັກສນະອັນໃດຂອງພຣະເຈົ້າດຶງດູດທ່ານໃຫ້ເຂົ້າມານະມັສການ? ຈົ່ງຈົດບັນທຶກສິ່ງເຫຼົ່ານັ້ນໃນຂນະທີ່ທ່ານນະມັສການໃນອາທິດນີ້.
- **ສະຖານທີ່ແຫ່ງການເຕີບໃຫຍ່.** ຈົ່ງອ່ານພຣະຄັມພີ ໂກໂລຊາຍ ບົດທີ 1 ຂໍ້ 15-20. ຈົ່ງບັນທຶກພຣະຄຸນລັກສນະທັງໝົດຂອງອົງພຣະເຢຊູຄຣິດທີ່ເຫັນຢູ່ໃນຂໍ້ພຣະຄັມພີເຫຼົ່ານີ້ ທີ່ບັນລະຍາຍເຖິງສາລະສໍາຄັນຂອງອົງພຣະຄຣິດ. ຈົ່ງເລືອກເອົາສອງຫຼືສາມຂອງການບັນລະຍາຍເຣື່ອງພຣະເຢຊູ ແລະຄົ້ນຫາພຣະຄັມພີ ຫຼື ຄໍາພະຍາກອນອື່ນໆທີ່ສນັບສນູນການບັນລະຍາຍແຕ່ລະຂໍ້.
- **ສະຖານທີ່ຫວ່ານເມັດພືດ.** ທ່ານຮູ້ຈັກຄົນທີ່ບໍ່ມີຄວາມຫວັງບໍ່? ການນະມັສການຂອງທ່ານຈະຊີ້ທາງໄປຫາພຣະເຈົ້າຜູ້ຊົງປະທານພຣະຄຸນແກ່ບັນດາຜູ້ສແວງຫາພຣະອົງໄດ້ແນວໃດ? ຈົ່ງເລີ່ມຕົ້ນອະທິຖານເພື່ອພວກເຂົາເຈົ້າໂດຍອອກຊື່ ແລະຂໍໃຫ້ພຣະເຈົ້າຊົງເປີດໂອກາດທີ່ຈະຊີ້ໃຫ້ພວກເຂົາເຈົ້າໄປຫາອົງພຣະຄຣິດ ບ່ອນທີ່ຄວາມຫວັງແລະຄວາມປອບໂຍນທີ່ແທ້ຈິງໄດ້ພົບເຫັນ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ SSK**